ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 269 /ນຍ
ນະຄອນຫຼວງວຽງຈັນ, ວັນທີ 30.03.2021

# ດຳລັດ
## ວ່າດ້ວຍ ການສ້າງຕັ້ງ ອຸທິຍານແຫ່ງຊາດເຊປຽນ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍ ປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ດຳລັດວ່າດ້ວຍ ປ່າສະຫງວນແຫ່ງຊາດ ສະບັບເລກທີ 134/ລບ, ລົງວັນທີ 13/5/2015;
- ອີງຕາມ ໜັງສືສະເໜີ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0023/ກປ, ລົງວັນທີ 13 ມັງກອນ 2021.

## ນາຍົກລັດຖະມົນຕີ ອອກດຳລັດ:

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ວາງອອກ ເພື່ອປະກາດສ້າງຕັ້ງ ອຸທິຍານແຫ່ງຊາດເຊປຽນ ໃນການປົກປັກຮັກສາ, ຄຸ້ມຄອງ ລັກສະນະສະເພາະທີ່ໂດດເດັ່ນ ພູມິທັດປ່າໄມ້, ປ່າດົງດິບຮາບພຽງ, ທົ່ງຫຍ້າ, ປ່າໂຄກ, ສາຍນ້ຳ, ທີ່ດິນບໍລິເວນນ້ຳ, ຫຼາກຫຼາຍທາງດ້ານຊີວະນາໆພັນ, ຖິ່ນທີ່ຢູ່ອາໄສຂອງພັນສັດ, ພັນພືດ ແລະ ເຄື່ອງປ່າຂອງດົງ, ອະນຸລັກຮັກສາໄວ້ຄວາມສວຍສົດງົດງາມຂອງທິວທັດທຳມະຊາດ, ວັດຖຸບູຮານທາງດ້ານວັດທະນະທຳ, ທ່ອງທ່ຽວ ແລະ ສຶກສາຄົ້ນຄວ້າທາງດ້ານວິທະຍາສາດ ແນໃສ່ ປະກອບສ່ວນເຂົ້າໃນການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ແລະ ພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ທີ່ຕັ້ງ, ຂອບເຂດ ແລະ ເນື້ອທີ່ ອຸທິຍານແຫ່ງຊາດເຊປຽນ**

ອຸທິຍານແຫ່ງຊາດເຊປຽນ ມີທີ່ຕັ້ງຢູ່ ແຂວງຈຳປາສັກ ກວມເອົາ ສອງ ເມືອງ ຄື: ເມືອງປະທຸມພອນ ແລະ ເມືອງໂຂງ ແລະ ແຂວງອັດຕະປື ກວມເອົາ ໜຶ່ງ ເມືອງ ຄື: ເມືອງສະໜາມໄຊ ຊຶ່ງຢູ່ໃນລະຫວ່າງ ເສັ້ນແວງ ແລະ ເສັ້ນຂະໜານ ດັ່ງນີ້:

| | | |
|---|---|---|
| ທິດເໜືອ | ເສັ້ນແວງ | 106º01’14” |
| | ເສັ້ນຂະໜານ | 14º47’10” |
| ທິດຕາເວັນອອກ | ເສັ້ນແວງ | 106º29’16” |
| | ເສັ້ນຂະໜານ | 14º34’13” |
| ທິດໃຕ້ | ເສັ້ນແວງ | 106º05’45” |
| | ເສັ້ນຂະໜານ | 14º01’47” |
| ທິດຕາເວັນຕົກ | ເສັ້ນແວງ | 105º54’16” |
| | ເສັ້ນຂະໜານ | 14º35’34". |

ຂອບເຂດອຸທິຍານແຫ່ງຊາດເຊປຽນ ໃຫ້ອີງໃສ່ ແຜນທີ່ພູມມີປະເທດ ມາດຕາສ່ວນ 1:100.000 ໂດຍຖືເອົາ ເສັ້ນແວງ ແລະ ເສັ້ນຂະໜານ ເປັນຫຼັກ ລົມທຽບໃສ່ກັບພື້ນທີ່ຕົວຈິງ ເຊັ່ນ ສັນພູ (ສັນປັນນ້ຳ), ຕີນພູ, ສາຍຫ້ວຍ, ແມ່ນ້ຳ, ເສັ້ນທາງ ເປັນຂີດໝາຍ ເພື່ອໃຫ້ອົງການປົກຄອງທ້ອງຖິ່ນ ຕະຫຼອດຮອດປະຊາຊົນບັນດາເຜົ່າໄດ້ຮັບຮູ້ ແລະ ໃຫ້ຄວາມຮ່ວມມື ໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ເປັນຢ່າງດີ.

ອຸທິຍານແຫ່ງຊາດເຊປຽນ ມີເນື້ອທີ່ທັງໝົດ ສອງຮ້ອຍຫ້າສິບແປດພັນຫົກຮ້ອຍສາມສິບສີ່ (258.634) ເຮັກຕາ ກວມເອົາແຂວງຈຳປາສັກ ສອງຮ້ອຍສິບສາມພັນສອງຮ້ອຍສິບເຈັດ (213.217) ເຮັກຕາ ແລະ ກວມເອົາ ແຂວງອັດຕະປື ສີ່ສິບຫ້າພັນສີ່ຮ້ອຍສິບເຈັດ (45.417) ເຮັກຕາ.

ທີ່ຕັ້ງ ແລະ ເນື້ອທີ່ ຂອງອຸທິຍານແຫ່ງຊາດເຊປຽນ ໄດ້ສະແດງໃຫ້ເຫັນຢູ່ໃນແຜນທີ່ ມາດຕາສ່ວນ 1:500.000 ທີ່ຄັດຕິດມາພ້ອມນີ້.

**ມາດຕາ 3 ການຄຸ້ມຄອງ**

ການຄຸ້ມຄອງ ອຸທິຍານແຫ່ງຊາດເຊປຽນ ມີ ກອງຄຸ້ມຄອງອຸທິຍານແຫ່ງຊາດເຊປຽນ. ສຳລັບ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກອງຄຸ້ມຄອງດັ່ງກ່າວ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 4 ແຫຼ່ງທຶນ**

ແຫຼ່ງທຶນທີ່ນຳໃຊ້ເຂົ້າໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ອຸທິຍານແຫ່ງຊາດເຊປຽນ ມີດັ່ງນີ້:

1. ງົບປະມານຂອງລັດ;
2. ກອງທຶນປົກປັກຮັກສາປ່າໄມ້;
3. ກອງທຶນປົກປັກຮັກສາສິ່ງແວດລ້ອມ;
4. ການປະກອບທຶນຂອງກິດຈະການ ຫຼື ໂຄງການທີ່ດຳເນີນຢູ່ໃນເຂດອຸທິຍານ ແຫ່ງຊາດ ຫຼື ພື້ນທີ່ໃກ້ຄຽງ ທີ່ສົ່ງຜົນກະທົບຕໍ່ ອຸທິຍານແຫ່ງຊາດເຊປຽນ;
5. ກອງທຶນການທ່ອງທ່ຽວ;
6. ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຂອງລັດ, ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ;
7. ແຫຼ່ງທຶນອື່ນທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 5 ການຈັດຕັ້ງປະຕິບັດ**

ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເປັນຜູ້ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

ບັນດາກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 6 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນໄດ້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ພັນຄຳ ວິພາວັນ